ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມປ່າໄມ້

5834

ເລກທີ:................/ກປມ

ນະຄອນຫລວງວຽງຈັນ, ວັນທີ: 25 NOV 2025

# ຫນັງສືແຈ້ງເຊີນປະມູນ

ເຖິງ: ບັນດາບໍລິສັດທີ່ຈຳໜ່າຍເຄື່ອງໄອທີ ແລະ ຄອມພິວເຕີ

ເລື່ອງ: ເຂົ້າຮ່ວມປະມູນຈັດຊື້ ແລະ ສະໜອງເຄື່ອງຄອມພິວເຕີ, ເຄື່ອງພິມ ແລະ ເຄື່ອງສຽງໃຫ້ຫ້ອງການປະສານງານຂັ້ນສູນກາງ, ຂັ້ນເມືອງ ແລະ ແຂວງ ຂອງໂຄງການ ພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ.

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ທຶນກູ້ຢືມຈາກທະນາຄານໂລກ ສຳລັບ ການຈັດຕັ້ງປະຕິບັດ ໂຄງການ ພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ ເຊິ່ງທາງ ໂຄງການໄດ້ຮັບອະນຸມັດງົບປະມານ ແລະ ມີຈຸດປະສົ່ງນຳໃຊ້ ເຂົ້າໃນການປະມູນຈັດຊື້ ແລະ ສະໜອງເຄື່ອງຄອມພິວເຕີ, ເຄື່ອງພິມແລະ ເຄື່ອງສຽງໃຫ້ຫ້ອງການປະສານງານຂັ້ນສູນກາງ, ຂັ້ນເມືອງ ແລະ ແຂວງ ຂອງໂຄງການ ພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ.
2. ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຂໍຖືເປັນກຽດເຊີນ ບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບ ການຈັດຊື້ ແລະ ສະໜອງເຄື່ອງຄອມພິວເຕີ, ເຄື່ອງພິມແລະ ເຄື່ອງສຽງໃຫ້ຫ້ອງການປະສານງານຂັ້ນສູນກາງ, ຂັ້ນເມືອງ ແລະ ແຂວງ ຂອງໂຄງການ ພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ.
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງ ພາຍໃນຕາມທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017, ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄູ່ມືແນະນຳ: ຂອງທະນາຄານໂລກ ວ່າດ້ວຍຫລັກການ ການຈັດຊື້ - ຈັດຈ້າງ ສຳລັບ ປະເທດຜູ້ກູ້ຢືມ (Procurement Regulations for IPF Borrowers), ສະບັບເດືອນ ກໍລະກົດ 2016 ການປະມູນແມ່ນເປີດໃຫ້ຜູ້ປະມູນທຸກໆ ບໍລິສັດ ທີ່ມີຄວາມເໝາະສົມ ຕາມບົດແນະນຳວ່າດ້ວຍການຈັດຊື້ - ຈັດຈ້າງ. ພ້ອມກັນນັ້ນໃຫ້ເບິ່ງຫຍໍ້ໜ້າ 3.15, 3.18 ແລະ 3.19 ທີ່ກຳນົດໄວ້ ໃນນະໂຍບາຍ ຂອງທະນາຄານໂລກ ວ່າດ້ວຍການມີຜົນປະໂຫຍດຊໍ້າຊ້ອນ.
4. ບໍລິສັດທີ່ມີຄວາມເໝາະສົມ ອາດຈະຂໍຂໍ້ມູນເພີ່ມເຕີມ ຫຼື ຂໍເອກະສານປະມູນ ຈາກໂຄງການພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ, ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນເວລາໂມງລັດຖະການແຕ່ 08:00 ຫາ 16:00 ໂມງ ຕາມທີ່ຢູ່ຂ້າງລຸ່ມນີ້.
5. ບໍລິສັດທີ່ມີຄວາມເໝາະສົມ ສາມາດຕິດຕໍ່ພົວພັນຮັບເອກະສານປະມູນຄົບຊຸດເປັນພາສາລາວ ໂດຍຍື່ນໜັງສືຫາທີ່ຢູ່ຂ້າງລຸ່ມນີ້.
6. ຊອງປະມູນຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມນີ້ ກ່ອນເວລາ 9:00 ໂມງ, ວັນທີ 14 ມັງກອນ 2026 ການສົ່ງເອກະສານປະມູນດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ຊອງປະມູນທີ່ສົ່ງຊ້າຈະຖືກປະຕິເສດ. ຊອງປະມູນຈະເປີດໃນເວລາ 9:00 ໂມງ ຂອງມື້ດຽວກັນ. ການເປີດຊອງປະມູນຈະເປີດຕໍ່ໜ້າສາທາລະນະໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມຢູ່ສະຖານທີ່ງກຳນົດໄວ້ຂ້າງລຸ່ມນີ້.
7. ທຸກໆເອກະສານຈະຕ້ອງປະກອບແຈ້ງການຄໍ້າປະກັນການປະມູນດ້ວຍກຽດ.
8. ທ່ານສາມາດຕິດຕໍ່ພົວພັນ ແລະ ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ ໂຄງການພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ, ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ບ້ານສີສະເກດ, ຄຸ້ມທາດດຳ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ. ຕິດຕໍ່ພົວພັນ ທ່ານ ນາງ ຍົມມາລາ ແພງສຸວັນ ຜູ້ປະສານງານໂຄງການ ໄດ້ທີ່ ໂທລະສັບ: (+856) 20 28227153 ອີເມວ: phyommala@gmail.com

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ກົມປ່າໄມ້

ທນ ຫົວໜ້າກົມ

ສົມບູນ ເລັ່ງສະຫວັດ